# ຄູ່ມືການຕັ້ງຄ່າຜູ້ໃຊ້ 2.0

OR PTC DCI

ເວີຊັນ 2.0

## ສາລະບານ


ປະຕິເສດຄວາມຮັບຜິດຊອບ .......... 2
ການຕັ້ງຄ່າຜູ້ໃຊ້ .......... 2
ປ່ຽນລະຫັດຜ່ານ .......... 2
ລືມລະຫັດຜ່ານ .......... 4
ຕັ້ງຄ່າລະຫັດຄືນໃໝ່ .......... 7
ເພີ່ມ PIN .......... 10
ປ່ຽນ PIN .......... 11
ປ່ຽນຄຳຖາຄວາມປອດໄພ .......... 13
ການປ່ຽນອີເມວ .......... 15
ຢືນຢັນເບີໂທລະສັບມືຖື .......... 17
ປ່ຽນຊື່ຜູ້ໃຊ້ .......... 19

## ປະຕິເສດຄວາມຮັບຜິດຊອບ

ເນື້ອຫາທີ່ພົບໃນເອກະສານສະບັບນີ້ແມ່ນມີໃຫ້ເພື່ອຜູ້ໃຊ້ OR PTC DCI ທັງໝົດ. ພາບບັນທຶກໜ້າຈໍໃນເອກະສານສະບັບນີ້ແມ່ນມາຈາກທັດສະນະຂອງຜູ້ໃຫ້ການປິ່ນປົວ, ແຕ່ຂັ້ນຕອນຕ່າງໆແມ່ນຄືກັນສຳລັບຜູ້ໃຊ້ປະເພດອື່ນໆທັງໝົດ.

## ການຕັ້ງຄ່າຜູ້ໃຊ້

ໃນເວລາທີ່ລົງຊື່ເຂົ້າໃຊ້ໃນເວັບພອດໂທລ OR PTC DCI, ທ່ານສາມາດປ່ຽນລະຫັດ, PIN, ຄຳຖາມເພື່ອຄວາມປອດໄພ, ອີເມວ ແລະ ຊື່ຜູ້ໃຊ້ຂອງທ່ານໄດ້. ທ່ານຍັງສາມາດຢືນຢັນເບີໂທລະສັບມືຖືຂອງທ່ານໄດ້ນຳອີກ. ຖ້າຫາກທ່ານບໍ່ສາມາດລົງຊື່ເຂົ້າໃຊ້ໃນເວັບເວັບພອດທໍລ໌ OR PTC DCI, ທ່ານສາມາດຕັ້ງຄ່າລະຫັດຜ່ານຂອງທ່ານຄືນໃໝ່ ຫຼື ຂໍຄວາມຊ່ວຍເຫຼືອໃນການຕັ້ງຄ່າມັນຄືນໃໝ່ໄດ້. ຖ້າຫາກທ່ານຕ້ອງການອັບເດດຂໍ້ມູນໃດໆທີ່ບໍ່ມີຢູ່ໃນຄູ່ມືນີ້, ຕິດຕໍ່ຫາຫ້ອງການໃນທ້ອງຖິ່ນຂອງທ່ານ (ຖ້າຫາກທ່ານແມ່ນສະມາຊິກພະນັກງານ, ຕິດຕໍ່ຫາທີມຊ່ວຍເຫຼືອ PTC).

## ປ່ຽນລະຫັດຜ່ານ

ທ່ານອາດຈະຕ້ອງການປ່ຽນລະຫັດຜ່ານ OR PTC DCI ຂອງທ່ານ.

**ໝາຍເຫດ**: ເພື່ອປ່ຽນລະຫັດຜ່ານຂອງທ່ານໂດຍນຳໃຊ້ວິທີນີ້, ທ່ານຕ້ອງຮູ້ລະຫັດຜ່ານປັດຈຸບັນຂອງທ່ານ.

ເພື່ອປ່ຽນລະຫັດຜ່ານຂອງທ່ານ:

1. ເລືອກໄອຄອນບຸກຄົນທີ່ຢູ່ຖັດຈາກຊື່ຜູ້ໃຊ້ຂອງທ່ານ.
2. ເລືອກການຕັ້ງຄ່າ.



3. ປ້ອນລະຫັດຜ່ານປັດຈຸບັນ.
4. ປ້ອນລະຫັດຜ່ານໃໝ່ໂດຍອີງຕາມເກນກຳນົດລະຫັດຜ່ານ.
    a. ຕ້ອງມີຢ່າງໜ້ອຍ 10 ຕົວອັກສອນ.
    b. ຕ້ອງມີຕົວອັກສອນໃຫຍ່ 1 ຕົວ, ຕົວອັນສອນນ້ອຍ, ຕົວເລກ ແລະ ຕົວອັກສອນພິເສດ.
    c. ຕ້ອງບໍ່ມີຕົວອັກສອນຊ້ຳກັນເກີນສອງຕົວຕິດຕໍ່ກັນ.
    d. ຕ້ອງແຕກຕ່າງກັນຈາກລະຫັດຜ່ານ 24 ຕົວທີ່ຜ່ານມາ.
5. ພິມລະຫັດຜ່ານໃໝ່ອີກຄັ້ງ.
6. ເລືອກປ່ຽນລະຫັດຜ່ານເພື່ອດຳເນີນການປ່ຽນແປງ.




7. ເລືອກແມ່ນແລ້ວເພື່ອຢືນຢັນການປ່ຽນລະຫັດຜ່ານ.



8. ຈາກນັ້ນທ່ານຈະເຫັນປ້າຍສີຂຽວທີ່ຂຶ້ນວ່າ "ປ່ຽນລະຫັດຜ່ານສຳເລັດ!" ລະຫັດຜ່ານຂອງທ່ານໄດ້ຮັບການອັບເດດແລ້ວ ແລະ ບໍ່ຈຳເປັນຕ້ອງດຳເນີນການອື່ນໆ.
9. ເລືອກໄອຄອນໜ້າຫຼັກ ຫຼື OR PTC DCI ເພື່ອກັບໄປສູ່ໜ້າຫຼັກ.




## ລືມລະຫັດຜ່ານ

ຖ້າຫາກທ່ານລືມລະຫັດຜ່ານ ແລະ ມີອີເມວທີ່ຢູ່ໃນຊຸດເອກະສານ, ທ່ານສາມາດຕັ້ງຄ່າລະຫັດຜ່ານຂອງທ່ານໄດ້.

ເພື່ອຕັ້ງຄ່າລະຫັດຜ່ານຄືນໃໝ່:

1. ເລືອກ "ລືມລະຫັດຜ່ານຂອງທ່ານແມ່ນບໍ່?" ປຸ່ມໃນໜ້າຈໍລົງຊື່ເຂົ້າໃຊ້.
2. ປ້ອນທີ່ຢູ່ອີເມວໃນຊ່ອງອີເມວ.
3. ຄລິກປຸ່ມສົ່ງອີເມວຕັ້ງຄ່າຄືນໃໝ່.






4. ຈາກນັ້ນທ່ານຈະໄດ້ຮັບການແຈ້ງເຕືອນການຢືນຢັນ. ໄປທີ່ອີເມວຂອງທ່ານໃນໄຟລ໌ຢູ່ໃນ OR PTC DCI.




5. ເປີດອີເມວຕັ້ງຄ່າລະຫັດຜ່ານຄືນຈາກ orptcsupport@dcisoftware.com.
6. ຄລິກຕັ້ງຄ່າລະຫັດຜ່ານຄືນໃໝ່.




**ໝາຍເຫດ**:
ຖ້າຫາກທ່ານບໍ່ໄດ້ຮັບອີເມວ:

- ທຳອິດ, ກວດເບິ່ງໂຟລເດີສະແປມຂອງທ່ານ.
- ຈາກນັ້ນ, ໂທຫາຫ້ອງການໂຄງການຂອງທ່ານເພື່ອກວດສອບໃຫ້ແນ່ໃຈວ່າທີ່ຢູ່ອີເມວຖືກຕ້ອງທີ່ຢູ່ໃນໄຟລ໌ຂອງທ່ານ.

7. ເພື່ອຕັ້ງຄ່າລະຫັດຜ່ານຄືນໃໝ່, ທ່ານຕ້ອງລະບຸຢ່າງໃດໜຶ່ງ:
    a. ຄຳຕອບຕໍ່ຄຳຖາມຄວາມປອດໄພຂອງທ່ານ, **ຫຼື**
    b. ຕົວເລກ 4 ຕົວທ້າຍຂອງເລກບັດປະກັນສັງຄົມຂອງທ່ານ <u>ແລະ</u> ວັນເດືອນປີເກີດຂອງທ່ານ.
8. ປ້ອນຄຳຕອບຕໍ່ໜຶ່ງໃນສອງຕົວເລືອກ, ຈາກນັ້ນຄລິກກວດສອບ.




**ໝາຍເຫດ**: ຕົວເລືອກ b ອາດຈະບໍ່ມີໃຫ້, ຖ້າຫາກ OR PTC DCI ບໍ່ມີຂໍ້ມູນທີ່ກຳນົດໃນໄຟລ໌ສຳລັບທ່ານ.

9. ປ້ອນລະຫັດໃໝ່ທີ່ທ່ານຕ້ອງການນຳໃຊ້.
10. ປ້ອນລະຫັດຜ່ານໃໝ່ອີກຄັ້ງ.
11. ເລືອກປຸ່ມຕັ້ງຄ່າຄືນໃໝ່ເພື່ອດຳເນີນການຕັ້ງຄ່າລະຫັດຜ່ານໃໝ່.

**ໝາຍເຫດ**: ເລືອກໄອຄອນ "*i*" ສີດຳທີ່ສະແດງກຳນົດລະຫັດຜ່ານ.



12. ຄລິກແມ່ນແລ້ວເພື່ອຢືນຢັນລະຫັດຜ່ານໃໝ່. ທ່ານຈະກັບໄປສູ່ໜ້າຈໍເຂົ້າສູ່ລະບົບ OR PTC DCI. ປ້ອນຊື່ຜູ້ໃຊ້ ແລະ ລະຫັດຜ່ານຂອງທ່ານເພື່ອເຂົ້າສູ່ລະບົບ.




## ຕັ້ງຄ່າລະຫັດຄືນໃໝ່

ຖ້າຫາກທ່ານບໍ່ສາມາດຢືນຢັນຕົນເອງໂດຍນຳໃຊ້ລີ້ງລືມລະຫັດຜ່ານ, ຕິດຕໍ່ຫາໂຕະຊ່ວຍເຫຼືອ DCI ທີ່ 855-565-0155 ຫຼື ຫ້ອງການທ້ອງຖິ່ນຂອງທ່ານເພື່ອຂໍການຕັ້ງຄ່າລະຫັດຄືນໃໝ່.

ເມື່ອໄດ້ຕັ້ງຄ່າລະຫັດຄືນໃໝ່ແລ້ວ, ປະຕິບັດຕາມຂັ້ນຕອນດັ່ງຕໍ່ໄປນີ້:

1. ເປີດອີເມວຕັ້ງຄ່າລະຫັດຜ່ານຄືນໃໝ່ຈາກ orptcsupport@dcisoftware.com ແລະ ເລືອກປຸ່ມການຕັ້ງຄ່າລະຫັດຜ່ານຄືນໃໝ່ເພື່ອຕິດຕັ້ງເວັບຜອດໂທລ OR PTC DCI.

**ໝາຍເຫດ:** ພະນັກງານຄວນສົ່ງອີເມວຫາທີມສະໜັບສະໜູນ PTC ທີ່ PTC.Support@odhsoha.oregon.gov. ພະນັກງານຢ່າຕິດຕໍ່ຫາໂຕະຊ່ວຍເຫຼືອ DCI.

# ຄູ່ມືການຕັ້ງຄ່າຜູ້ໃຊ້ 2.0

**ໝາຍເຫດ**:
ຖ້າຫາກທ່ານບໍ່ໄດ້ຮັບອີເມວ:

- ທຳອິດ, ກວດເບິ່ງໂຟລເດີສະແປມຂອງທ່ານ.
- ຈາກນັ້ນ, ໂທຫາຫ້ອງການທ້ອງຖິ່ນຂອງທ່ານເພື່ອເຮັດໃຫ້ແນ່ໃຈວ່າທີ່ຢູ່ອີເມວຖືກຕ້ອງແມ່ນຢູ່ໃນໄຟລສຳລັບທ່ານໃນ OR PTC DCI.




2. ປ້ອນລະຫັດໃໝ່ທີ່ທ່ານຕ້ອງການນຳໃຊ້.
3. ປ້ອນລະຫັດຜ່ານໃໝ່ອີກຄັ້ງ.
4. ເລືອກປຸ່ມຕັ້ງຄ່າຄືນໃໝ່ເພື່ອດຳເນີນການຕັ້ງຄ່າລະຫັດຜ່ານໃໝ່.
5. ເລືອກແມ່ນແລ້ວເພື່ອຢືນຢັນການຕັ້ງຄ່າລະຫັດຜ່ານຄືນໃໝ່.







**ໝາຍເຫດ**: ເລືອກໄອຄອນ "*i*" ສີດຳທີ່ສະແດງກຳນົດລະຫັດຜ່ານ.

ຄັ້ງຕໍ່ໄປທີ່ທ່ານລົງຊື່ເຂົ້າໃຊ້ໃນ OR PTC DCI, ທ່ານຈະໄດ້ຮັບຄໍາແນະນໍາເພື່ອອັບເດດລາຍລະອຽດຄວາມປອດໄພຂອງທ່ານ.

1. ເລືອກຄໍາຖາມເພື່ອຄວາມປອດໄພໃໝ່.
2. ປ້ອນຄໍາຕອບເພື່ອຄວາມປອດໄພໃໝ່.
3. ເລືອກບັນທຶກເພື່ອອັບເດດລາຍລະອຽດຄວາມປອດໄພ.

**ໝາຍເຫດ**: ຖ້າຫາກທ່ານ**ບໍ່**ນໍາໃຊ້ PIN, ເຮັດສໍາເລັດຂັ້ນຕອນ 3 ເພື່ອເຮັດສໍາເລັດການຕັ້ງຄ່າລະຫັດຜ່ານຄືນໃໝ່. ຖ້າຫາກທ່ານ**ນໍາ**ໃຊ້ PIN, ທ່ານຕ້ອງເພີ່ມ PIN ໃໝ່ (ເບິ່ງ ເພີ່ມ PIN ສໍາລັບຄໍາແນະນໍາ).



## ເພີ່ມ PIN

ຖ້າຫາກທ່ານຕິດຕໍ່ຫາໂຕະຊ່ວຍເຫຼືອ DCI ຫຼື ຝ່າຍສະໜັບສະໜູນ PTC ສໍາລັບຄວາມຊ່ວຍເຫຼືອດ້ານລະຫັດຜ່ານ, ພວກເຂົາຈະຕັ້ງຄ່າບັນຊີຂອງທ່ານຄືນໃໝ່. ການດໍາເນີນການດັ່ງກ່າວກໍານົດໃຫ້ທ່ານເພີ່ມ PIN ໃໝ່. ທ່ານຍັງສາມາດເພີ່ມ/ປ່ຽນ PIN ຂອງທ່ານເນື່ອງຈາກວ່າມັນຈໍາເປັນສໍາລັບໂທລະສັບຕັ້ງໂຕະ OR PTC DCI.

1. ເລືອກໄອຄອນບຸກຄົນທີ່ຢູ່ຖັດຈາກຊື່ຜູ້ໃຊ້ຂອງທ່ານ.
2. ເລືອກການຕັ້ງຄ່າ.




3. ຄລິກເພີ່ມ PIN ໃໝ່.
4. ປ້ອນ PIN ໃໝ່.
5. ຢືນຢັນ PIN.
6. ເລືອກເພີ່ມ PIN ໃໝ່.



7. ເລືອກແມ່ນແລ້ວເພື່ອຢືນຢັນ PIN ໃໝ່.

ລະຫັດຜ່ານໄດ້ຖືກຕັ້ງຄ່າຄືນໃໝ່ ແລະ PIN ໄດ້ຮັບການອັບເດດແລ້ວ.




## ປ່ຽນ PIN

ທ່ານສາມາດປ່ຽນ PIN ຂອງທ່ານໃນ OR PTC DCI ໄດ້ຕະຫຼອດເວລາ.

1. ເລືອກໄອຄອນບຸກຄົນທີ່ຢູ່ຖັດຈາກຊື່ຜູ້ໃຊ້ຂອງທ່ານ.
2. ເລືອກການຕັ້ງຄ່າ.
3. ເລືອກປ່ຽນ PIN.
4. ປ້ອນລະຫັດຜ່ານ OR PTC DCI ຂອງທ່ານ.
5. ເລືອກກວດສອບ.






6. ປ້ອນ PIN ໃໝ່.
7. ປ້ອນ PIN ໃໝ່ອີກຄັ້ງ.
8. ເລືອກປຸ່ມ PIN ເພື່ອບັນທຶກ.
9. ເລືອກແມ່ນແລ້ວເພື່ອຢືນຢັນການປ່ຽນແປງ PIN.




10. ຈາກນັ້ນທ່ານຈະເຫັນປ້າຍສີຂຽວຂຶ້ນວ່າ, "ປ່ຽນ Pin ສຳເລັດ!" ຕອນນີ້ PIN ຂອງທ່ານໄດ້ຮັບການອັບເດດແລ້ວ ແລະ ບໍ່ຈຳເປັນຕ້ອງດຳເນີນການໃດໆ.
11. ເລືອກໄອຄອນໜ້າຫຼັກ ຫຼື OR PTC DCI ເພື່ອກັບໄປສູ່ໜ້າຫຼັກ.



## ປ່ຽນຄຳຖາມຄວາມປອດໄພ

ທ່ານອາດຈະຕ້ອງການປ່ຽນຄຳຖາມ ຫຼື ຄຳຕອບຄວາມປອດໄພຂອງທ່ານ. ຄຳຖາມເຫຼົ່ານີ້ແມ່ນຖືກນຳໃຊ້ເພື່ອຕັ້ງຄ່າລະຫັດຜ່ານຂອງທ່ານຄືນໃໝ່. ກະລຸນາກວດສອບວ່າທ່ານໄດ້ເລືອກຄຳຖາມ ແລະ ຄຳຕອບທີ່ທ່ານຈະຈື່.

1. ເລືອກໄອຄອນບຸກຄົນທີ່ຢູ່ຖັດຈາກຊື່ຜູ້ໃຊ້ຂອງທ່ານ.
2. ເລືອກການຕັ້ງຄ່າ.
3. ເລືອກແທັບປ່ຽນຄຳຖາມຄວາມປອດໄພ.
4. ປ້ອນລະຫັດຜ່ານປັດຈຸບັນຂອງທ່ານ.
5. ເລືອກກວດສອບ.







6. ເລືອກຄຳຖາມຄວາມປອດໄພຈາກລາຍການເລື່ອນລົງ.
7. ປ້ອນຄຳຕອບ.
8. ເລືອກສົ່ງເພື່ອບັນທຶກຄຳຖາມຄວາມປອດໄພ.



**ໝາຍເຫດ**: ຂໍ້ກຳນົດຄຳຖາມຄວາມປອດໄພ:

- ຄຳຕອບຂອງຄຳຖາມຄວາມປອດໄພຕ້ອງມີຢ່າງໜ້ອຍ 5 ຕົວອັກສອນ
- ຊື່ຜູ້ໃຊ້ ຫຼື ລະຫັດຜ່ານບໍ່ສາມາດຖືກນຳໃຊ້ເປັນຄຳຕອບຂອງຄຳຖາມຄວາມປອດໄພໄດ້
- ຖ້າຫາກຄຳຕອບຕໍ່ຄຳຖາມຄວາມປອດໄພຂອງທ່ານແມ່ນພົບໃນລາຍການລະຫັດຜ່ານທີ່ຖືກນຳໃຊ້ທົ່ວໄປ, ທ່ານຈະເຫັນຂໍ້ຄວາມດັ່ງຕໍ່ໄປນີ້:
    - ຄຳຕອບທີ່ທ່ານມີໃຫ້ແມ່ນພົບໃນລາຍການລະຫັດຜ່ານທີ່ຖືກນຳໃຊ້ທົ່ວໄປ ແລະ ສາມາດຄາດເດົາໄດ້ງ່າຍ. ພິຈາລະນານຳໃຊ້ຄຳສັບ ຫຼື ວະລີອື່ນໆ.
        - ຖ້າຫາກທ່ານຕ້ອງການສືບຕໍ່ນຳໃຊ້ຄຳສັບ ຫຼື ວະລີທີ່ທ່ານປ້ອນ, ຄລິກທີ່ຫ້ອງນຳໃຊ້ຄຳຕອບນີ້ຕໍ່ໄປ.
        - ຖ້າຫາກທ່ານຕ້ອງການປ້ອນຄຳສັບ ຫຼື ວະລີອື່ນ, ງ່າຍໆພຽງອັບເດດຊ່ອງຄຳຕອບພ້ອມກັບຄຳຕອບໃໝ່ຂອງທ່ານ.

9. ທ່ານຈະເຫັນປ້າຍສີຂຽວຂຶ້ນວ່າ "ປ່ຽນຄຳຖາມຄວາມປອດໄພສຳເລັດ!" ຄຳຖາມເພື່ອຄວາມປອດໄພແມ່ນໄດ້ຮັບການອັບເດດແລ້ວ ແລະ ບໍ່ຈຳເປັນຕ້ອງດຳເນີນການອື່ນໆ.
10. ເລືອກໄອຄອນໜ້າຫຼັກ ຫຼື OR PTC DCI ເພື່ອກັບໄປສູ່ໜ້າຫຼັກ.



## ການປ່ຽນອີເມວ

ທ່ານອາດຈະຕ້ອງການປ່ຽນທີ່ຢູ່ອີເມວຂອງທ່ານໃນໂພຣ໌ໃນ OR PTC DCI.

1. ເລືອກໄອຄອນບຸກຄົນທີ່ຢູ່ຖັດຈາກຊື່ຜູ້ໃຊ້ຂອງທ່ານ.
2. ເລືອກການຕັ້ງຄ່າ.
3. ເລືອກແທັບປ່ຽນອີເມວ.
4. ອີເມວປັດຈຸບັນຈະຖືກຕື່ມແລ້ວ.
5. ປ້ອນລະຫັດຜ່ານໃໝ່.
6. ຢືນຢັນລະຫັດຜ່ານໃໝ່.
7. ເລືອກປ່ຽນອີເມວເພື່ອບັນທຶກອີເມວໃໝ່.






8. ລະຫັດຢືນຢັນໄດ້ຖືກສົ່ງໄປທີ່ບັນຊີອີເມວໃໝ່ທີ່ຖືກເພີ່ມເຂົ້າ. ປ້ອນລະຫັດການຢືນຢັນທີ່ນີ້.
9. ຄລິກປ່ຽນອີເມວ.




10. ເລືອກ ແມ່ນແລ້ວເພື່ອຢືນຢັນການປ່ຽນແປງອີເມວ.
11. ປ້າຍສີຂຽວຈະປາກົດຂຶ້ນພ້ອມດ້ວຍ "ປ່ຽນອີເມວສຳເລັດ!" ທີ່ຢູ່ອີເມວຂອງທ່ານແມ່ນໄດ້ຮັບການອັບເດດແລ້ວ ແລະ ບໍ່ຈຳເປັນຕ້ອງດຳເນີນການອື່ນໆ.
12. ເລືອກໄອຄອນໜ້າຫຼັກ ຫຼື OR PTC DCI ເພື່ອກັບໄປສູ່ໜ້າຫຼັກ.






## ຢືນຢັນເບີໂທລະສັບມືຖື

ທ່ານຕ້ອງຢືນຢັນເບີໂທລະສັບມືຖືຂອງທ່ານເພື່ອໃຫ້ໄດ້ຮັບຂໍ້ຄວາມຈາກ OR PTC DCI.

1. ເລືອກໄອຄອນບຸກຄົນທີ່ຢູ່ຖັດຈາກຊື່ຜູ້ໃຊ້ຂອງທ່ານ.
2. ເລືອກການຕັ້ງຄ່າ.




3. ເລືອກແທັບກວດສອບມືຖື.
4. ປ້ອນເບີໂທລະສັບມືຖື.
5. ເລືອກອັບເດດເບີມືຖື.



6. ຄລິກສົ່ງລະຫັດກວດສອບ.




7. ທ່ານຈະໄດ້ຮັບຂໍ້ຄວາມພ້ອມກັບລະຫັດຢືນຢັນທີ່ເບີໂທລະສັບທີ່ທ່ານໄດ້ປ້ອນໃນ OR PTC DCI. ປ້ອນລະຫັດຜ່ານໃນຊ່ອງທີ່ລະບຸ "ລະຫັດການກວດສອບ".
8. ຄລິກກວດສອບມືຖື.



9. ຈາກນັ້ນປ້າຍສີຂຽວຈະສະແດງວ່າ "ເບີມືຖືຂອງທ່ານໄດ້ຮັບການກວດສອບແລ້ວ." ເບີໂທລະສັບໄດ້ຮັບການຢືນຢັນແລ້ວ ແລະ ບໍ່ຈໍາເປັນຕ້ອງດໍາເນີນການອື່ນໆ.
10. ເລືອກໄອຄອນໜ້າຫຼັກ ຫຼື OR PTC DCI ເພື່ອກັບໄປສູ່ໜ້າຫຼັກ.




ຖ້າຫາກທ່ານຕ້ອງການຢຸດຮັບເອົາຂໍ້ຄວາມ, ພິມຂໍ້ຄວາມ “ຢຸດ” ກັບຫາເບີໂທລະສັບທີ່ທ່ານໄດ້ຮັບຂໍ້ຄວາມຈາກ OR PTC DCI.

## ປ່ຽນຊື່ຜູ້ໃຊ້

ທ່ານອາດຕ້ອງການປ່ຽນຊື່ຜູ້ໃຊ້ OR PTC DCI ຂອງທ່ານ.

1. ເລືອກໄອຄອນບຸກຄົນທີ່ຢູ່ຖັດຈາກຊື່ຜູ້ໃຊ້ຂອງທ່ານ.
2. ເລືອກການຕັ້ງຄ່າ.
3. ເລືອກແທັບປ່ຽນຊື່ຜູ້ໃຊ້.
4. ປ້ອນຊື່ຜູ້ໃຊ້ທີ່ທ່ານຕ້ອງການໃນຊ່ອງຊື່ຜູ້ໃຊ້ໃໝ່.
5. ເລືອກປ່ຽນຊື່ຜູ້ໃຊ້ເພື່ອບັນທຶກ.






6. ເລືອກແມ່ນແລ້ວເພື່ອຢືນຢັນການປ່ຽນແປງ.




7. ປ້າຍສີຂຽວຈະປາກົດຂຶ້ນພ້ອມລະບຸວ່າ "ປ່ຽນຊື່ຜູ້ໃຊ້ສໍາເລັດ!" ຕອນນີ້ຊື່ຜູ້ໃຊ້ຂອງທ່ານໄດ້ປ່ຽນແປງແລ້ວ.
8. ເລືອກໄອຄອນໜ້າຫຼັກ ຫຼື OR PTC DCI ເພື່ອກັບໄປສູ່ໜ້າຫຼັກ.

